ສຳນັກງານໃຫຍ່

ເລກທີ: 016 /ທຄຕລ .ສພບ.2026
ນະຄອນຫຼວງວຽງຈັນ, ວັນທີ: 10 ເມສາ 2026

ໜັງສືລາຍງານ

ຮຽນ: ທ່ານຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ,
ທ່ານຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ,
ທ່ານຜູ້ລົງທຶນ ແລະ ຜູ້ຖືຮຸ້ນ ທຄຕລ ທີ່ເຄົາລົບ ແລະ ນັບຖືຢ່າງສູງ.

ເລື່ອງ: ແຈ້ງມະຕິທີ່ສຳຄັນຂອງສະພາບໍລິຫານ ກ່ຽວກັບວຽກງານພາຍໃນ ຂອງ ທຄຕລ.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ຂອງ ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ (ສະບັບປັບປຸງ) ສະບັບເລກທີ 15/ຄຄຊ, ລົງວັນທີ 11 ທັນວາ 2024;
- ອີງຕາມ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018;
- ອີງຕາມ ມະຕິຂອງສະພາບໍລິຫານ ທຄຕລ, ຄັ້ງວັນທີ 10 ເມສາ 2026;

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍຖືເປັນກຽດຮຽນລາຍງານມາຍັງທ່ານຊາບກ່ຽວກັບມະຕິທີ່ສຳຄັນຂອງສະພາບໍລິຫານ ທຄຕລ ຄັ້ງວັນທີ 10/04/2026 ເຊິ່ງໄດ້ມີມະຕິຕົກລົງດັ່ງນີ້:

1) ຮັບຮອງການປັບປຸງແຜນທຸລະກິດຂອງ ທຄຕລ ປະຈຳປີ 2026 ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງ;
2) ຮັບຮອງຜົນການກວດສອບເອກະສານລາຍງານການເງິນຂອງ ທຄຕລ ປະຈຳປີ 2025 ຕາມມາດຕະຖານລາວ (LAS) ແລະ ມາດຕະຖານສາກົນ (IFRS) ຈາກບໍລິສັດ PwC;
3) ເຫັນດີຮັບຮອງເອົາແຜນການຈັດສັນກຳໄລຫຼັງອາກອນ ປະຈຳປີ 2025 ເພື່ອຈ່າຍເຂົ້າຄັງຕ່າງໆຕາມລະບຽບການ, ຈ່າຍເງິນບຳເນັດປະຈຳປີໃຫ້ພະນັກງານ ແລະ ຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນ ດັ່ງນີ້:
   - ຫັກເຂົ້າຄັງສະສົມຕາມລະບຽບການ: **10%**;
   - ຈ່າຍເງິນບຳເນັດປະຈຳປີ (Bonus): **5%**;
   - ຈ່າຍເງິນປັນຜົນ: **200 ກີບ/ຮຸ້ນ**, ລວມມູນຄ່າເງິນປັນຜົນທັງໝົດ **308,974,400,000.00 ກີບ**;
   - ຍອດເຫຼືອຈາກການຈັດສັນກຳໄລ ແມ່ນນຳມອບເຂົ້າຄັງຂະຫຍາຍທຸລະກິດ;
   - ກຳນົດມື້ປິດປຶ້ມບັນຊີຜູ້ຖືຮຸ້ນ (Record Date) ເພື່ອກຳນົດສິດຮັບເງິນປັນຜົນ: **ວັນທີ 29 ເມສາ 2026**;
   - ກຳນົດມື້ຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນ: **ວັນທີ 15 ພຶດສະພາ 2026.**
4) ເຫັນດີຮັບຮອງດ້ານຫຼັກການ ກ່ຽວກັບ ການຄັດເລືອກ ແລະ ແຕ່ງຕັ້ງຜູ້ກວດສອບອິດສະລະ ປະຈຳປີ 2026, 2027 ແລະ 2028;
5) ເຫັນດີຮັບຮອງໜັງສືແຈ້ງເຊີນເຂົ້າຮ່ວມກອງປະຊຸມ ແລະ ເອກະສານປະກອບສຳລັບກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2025.

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານເພື່ອຊາບ.

ປະທານສະພາບໍລິຫານ

ສຸລິວັດ ສຸວັນນະຈຸມຄຳ